## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ທັນວາ 2007 ( 1-14-20067)

---

## <u>ແມ່ນຫຍັງເປັນບັນຫາອັນໃຫຍ່:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ 3:1-8,15-19,22-24

**<u>ຄວາມຈິງໃນພຣະຄັມພີ:</u>** ໂລກນີ້ເຕັມໄປດ້ວຍຄວາມແຕກຫັກແລະຊົ່ວຮ້າຍເພາະມະນຸດບໍ່ໄດ້ເຊື່ອຟັງພຣະເຈົ້າ ພວກເຂົາເອງເປັນຄົນນຳເອົາການລົງໂທດມາຫາເຂົາເອງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ວຍໃຫ້ມີຊີວິດຢູ່ຕາມຫລັກຄຳສອນຂອງພຣະຄັມພີ.

- ໄຈ້ແຍກເບິ່ງວ່າເປັນຫຍັງມະນຸດຈຶ່ງມັກເຮັດຜິດເຮັດບາບ.
- ຕັດສິນໃຈໃຫ້ພຣະເຈົ້າຊ່ວຍເພື່ອຈະຕໍ່ສູ້ກັບຄວາມຫລອກລວງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນຳ:</u>

1. ຂຽນຂໍ້ຄວາມເລົ່ານີ້ໃສ່ໃນກະດານ: ການທົດລອງ, ມານຊາຕານ, ເຈັບປວດ, ຄວາມທໍຣະມານ, ການຕໍ່ສູ້ ເປັນສິ່ງທີ່ຂວາງທາງແຫ່ງຊີວິດຂອງພວກເຮົາ. **ຄຳຖາມ:** ເຮັດແນວໃດເຮົາຈະຫລີກເວັ້ນແລະຫັນປ່ຽນຈາກທິດທາງຂອງຊີວິດຈາກທິດທາງເຫລົ່ານີ້ໄດ້?
   - ເອົາຄວາມເຊື່ອຂອງຄົນທີ່ເຊື່ອສິ່ງຕ່າງ ໆ ແລະຄວາມເຊື່ອຂອງຄຣິສຕຽນມາຊັ່ງຊາວ່າ ຄວາມເຊື່ອອັນໃດທີ່ພາໃຫ້ໄດ້ຮັບບາບກັມອັນໃຫຍ່ຫລວງ.
2. **ອະທິບາຍໂດຍຫຍໍ້:** ແນະນຳບົດຮຽນມື້ນີ້ໃຫ້ນັກຮຽນໄປຄົ້ນຄວ້າວ່າຕາມຫົວຂໍ້ ຫລືໃຈຄວາມສຳລັບເດືອນນີ້ເໝາະສົມກັບແລະໄດ້ສອນເຂົາຢ່າງໃດ? **ຖາມ:** ທ່ານຈະອະທິບາຍເຣື່ອງຄວາມບາບໃຫ້ຊັດເຈນໄດ້ແນວໃດ?

## 1. <u>ຄຳສັ່ງຂອງພຣະເຈົ້າເພື່ອເປັນການດີສຳລັບພວກເຮົາ:</u> ( ປະຖົມມະການ 3:1-3 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ 3:1-3 ຍົກເອົາຄຳທີ່ວ່າ " **ເຮັດ, ຢ່າເຮັດ** " ມາສົນທະນາໃຫ້ໄດ້ຄວາມໝາຍ ແລະຄວາມເຂົ້າໃຈແຈ້ງຂຶ້ນ. **ຄຳຖາມ:** ໃນສອນເອເດັນນັ້ນມີສິ່ງໃດທີ່ພຣະເຈົ້າສັ່ງໃຫ້ເຮັດໄດ້ ແລະສິ່ງໃດທີ່ພຣະອົງຊົງຫ້າມບໍ່ໃຫ້ເຮັດ?

2) ຄົນທັງຫລາຍເຫັນຄຳວ່າ " ຢ່າເຮັດ " ໃນພຣະຄັມພີນັ້ນເປັນແນວໃດ?

3) ເປັນຫຍັງເຂົາຈຶ່ງເຫັນສິ່ງອື່ນທີ່ຕ້ອງຫ້າມສຳຄັນຫລາຍກວ່າ ສິ່ງທີ່ພຣະເຈົ້າອະນຸຍາດໃຫ້ເຮັດໄດ້ນັ້ນ?

4) **ອະທິບາຍ:** ສັງເກດເບິ່ງໃນພຣະທັມປະຖົມມະການບົດທີ 3:1-3 ກັບບົດທີ 2:15-17 ເຮົາຈະເຫັນວ່າພຣະເຈົ້າໄດ້ຊົງກຳນົດໃຫ້ອາດາມກ່ຽວກັບຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີຄວາມຊົ່ວ, ໃນບົດທີ 2:15-17 ກັບການຕີຄວາມໝາຍຂອງເອວາແລະພະຍາມານໃນ ບົດທີ 3:1-3 . **ຄຳຖາມ:** (1) - ມານໄດ້ປ່ຽນແປງຄຳເວົ້າຂອງພຣະເຈົ້າວ່າຢ່າງໃດ? ( 2) - ເປັນຫຍັງເອວາຈຶ່ງເພີ້ມເຕີມຄຳເວົ້າເຂົ້າໄປອີກ? ( ແຕະຕ້ອງ ) (3) - ຄຳສັ່ງຂອງພຣະເຈົ້າມີຄວາມໝາຍສຳຄັນອັນໃດຕໍ່ອາດາມແລະເອວາ? - ພຣະເຈົ້າຊົງປະທານໃຫ້ເຮົາທັງ ການບັງຄັບຄວບຄຸມ ແລະເສຣີພາບເພື່ອໃຫ້ພວກເຮົາເປັນຄົນດີ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** ປະຖົມມະການ 3:1-3

1. ງູດຶກດຳບັນນັ້ນແມ່ນໃຜ?
2. ໃນພຣະທັມ ມັດທາຍ 13:19; ລູກາ 10:18; ໂຢຮັນ 8:44; 12:31; 14:30; ເອເຟໂຊ 2:2; 6:11 ໄດ້ສອນພວກເຮົາວ່າ ແນວໃດກ່ຽວກັບເຣື່ອງຊາຕານ?
3. ມານຊາຕານຫລອກລວງເຮົາດ້ວຍວິທີໃດແດ່ໃນທຸກວັນນີ້?
4. ເຮັດແນວໃດເຮົາຈຶ່ງຈະສາມາດເຮັດຕາມຄຳສັ່ງຂອງພຣະເຈົ້າທີ່ວ່າເຮັດໄດ້ ຫລາຍກວ່າຄຳວ່າຢ່າເຮັດ ໃນການດຳເນີນຊີວິດເພື່ອໃຫ້ສົມກັບເປັນຜູ້ຕິດຕາມພຣະເຈົ້າ?

## 2. <u>ການທົດລອງໄດ້ຈູ່ໂຈມຂ້າພະເຈົ້າ:</u> ( ປະຖົມມະການ 3:4-6)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ປະຖົມມະການ 3:4-6

2) ການທົດລອງບໍ່ເໝືອນກັບການເຮັດບາບ. ການທົດລອງໃຊ້ເປັນປ້າຍຕັກເຕືອນວ່າຄວາມບາບຢູ່ທີ່ປະຕູ.. **ຄຳຖາມ:** ແມ່ນຫຍັງທີ່ເປັນປ້າຍຕັກເຕືອນນາງເອວາ ? ເປັນຫຍັງລາວຈຶ່ງບໍ່ຈື່ຈຳມັນ?

3) **ອະທິບາຍ:** ຈັດນັກຮຽນເປັນສອງທີມ: ທີມທີ 1 ໃຫ້ເປັນຝ່າຍຊາຕານຫລອກລວງ, ທີມທີ 2 ເປັນທີມທີ່ເຊື່ອຟັງພຣະເຈົ້າ. ໃຫ້ຖາມແລະຕອບກັນຕາມຂໍ້ 4-6 ນັ້ນ.

4) ໃຫ້ນັກຮຽນມີໂອກາດເວົ້າສິ່ງເຂົາເຈົ້າໄດ້ປະເຊີນກັບການທົດລອງໃຫ້ໝູ່ໃນຫ້ອງຮຽນຟັງຈະເປັນການດີ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ປະຖົມມະການ 3:4-6

1. ພະຍາມານໄດ້ປ່ຽນແປງຄວາມຈິງມາຫລອກໃຫ້ເອວາເຊື່ອຟັງແນວໃດ?
2. ຄວາມບາບໄດ້ເຂົ້າມາຫາເອວາໃນຕອນໃດ?
3. ທຸງສີແດງໄດ້ຊ່ອຍໃຫ້ທ່ານຈົດຈຳການທົດລອງ ແລະຄວາມບາບຫຍັງແດ່?
4. ຄວາມອ່ອນແອ ແລະຄວາມຍິ່ງໃຫຍ່ຂອງມະນຸດຢູ່ໃສ?
5. ຊາຕານໄດ້ເອົາຊະນະທ່ານຢູ່ບໍ?

## 3. <u>ຄວາມບາບໄດ້ຮັບຜົນຕອບແທນຢ່າງຮ້າຍແຮງ:</u> ( ປະຖົມມະການ 3:7-8;16-19)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມປະຖົມມະການ 3:7-8;16-19

2) ພວກເຮົາສາມາດຮູ້ຈັກການທົດລອງຫລາຍຢ່າງໂດຍຄຳຕັດສັ່ງຂອງພຣະເຈົ້າຊຶ່ງບໍ່ແມ່ນສະເພາະແຕ່ສິ່ງທີ່ເກີດຂຶ້ນກັບ **ອາດາມ** ແລະ **ເອວາ** ເທົ່ານັ້ນ, ແຕ່ຜົນຂອງຄວາມບາບນັ້ນໄດ້ແຜ່ລາມຕົກທອດຕລອດມາ ແລະຕໍ່ ໆ ໄປ.

3) **ຖາມ:** ໃນເມື່ອມະນຸດ ( ເອວາ ອາດາມ ) ໄດ້ເຮັດຜິດບາບແລະມີຜົນຫຍັງທີ່ຕາມມາ ແລະເຂົາຮູ້ສຶກແນວໃດ?

4) ມະນຸດພະຍາຍາມຫາທາງຫລົບໜີໃຫ້ຫລຸດພົ້ນຈາກບາບ ຫລືເຮັດໃຫ້ສິ່ງນຶ່ງສິ່ງໃດໃຫ້ລອດພົ້ນຈາກບາບຂອງເຂົາ?
5) ທ່ານມີຄວາມຮູ້ສຶກແນວໃດໃນເມື່ອທ່ານໄດ້ຮຽນຮູ້ວ່າບໍ່ມີຜູ້ໃດຫລີກໜີຈາກບາບກັນໄດ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ປະຖົມມະການ 3:7-8, 16-19

1. ຜົນກັມອັນໃຫຍ່ຫລວງຂອງການເຮັດຜິດບາບຂອງອາດາມ ເອວາແມ່ນຫຍັງແດ່?
2. ຜົນກັມຕລອດໄປ (ນິຣັນດອນ) ທີ່ຕົກມາເຖິງພວກເຮົາຈາກການກະທຳຂອງເອວາ ອາດາມນັ້ນມີຫຍັງແດ່?
3. ຜູ້ດຽວໄດ້ເຮັດຜິດບາບເປັນຫຍັງຄວາມບາບນັ້ນຈຶ່ງລາມມາເຖິງຄົນທຸກ ໆ ຄົນໄດ້?
4. ຄວາມບາບຂອງພວກເຮົາເປັນຜົນສະທ້ອນຕໍ່ຄວາມສັມພັນກັບພຣະເຈົ້າ ແລະກັບຄົນອື່ນໄດ້ຢ່າງໃດ?

**4. <u>ພຣະເຈົ້າຕອບສນອງຕໍ່ຄວາມບາບຂອງພວກເຮົາ:</u>** ປະຖົມມະການ 3:15,22-24

1) ຂໍໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ ປະຖົມມະການ 3:15,22-24.
2) ແນະນຳໃຫ້ນັກຮຽນເບິ່ງ ປະຖົມມະການບົດທີ 3:15 ແລະແບ່ງເປັນ 3 ພາກສ່ວນ, ແລ້ວຖາມ:
 - ທ່ານເຫັນຄຳສາບແຊ່ງອັນນີ້ຢູ່ໃສ? ທ່ານເຫັນວ່າມັນເປັນຂ່າວດີບໍ?
 - ໄຈ້ແຍກຕີຄວາມໝາຍຂອງພຣະຄຳເຫລົ່ານີ້, ແລະບອກນັກຮຽນວ່າ: ນີ້ເປັນຄຳສັນຍາຄັ້ງແຣກໃນພຣະຄັມພີຂອງ ການສະເດັດມາຂອງພຣະເມສິອາ (ພຣະເຢຊູ).
3) ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມປະຖົມມະການ 3:22-24. ຮຽນ ເຣື່ອງ " ຕົ້ນໄມ້ແຫ່ງຊີວິດນັ້ນ.
4) **ຖາມ:** ເຫດຜົນອັນໃດທີ່ເຮັດໃຫ້ ອາດາມ ແລະ ເອວາ ຖືກຂັບໄລ່ອອກຈາກສວນເອເດນ?
5) ສມັຍນີ້ພຣະເຈົ້າໄດ້ສຳແດງຄວາມເມດຕາຕໍ່ພວກເຮົາຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ປະຖົມມະການ 3:15,22-24

1. ທ່ານຈະແບ່ງພຣະທັມປະຖົມມະການ 3:15 ເປັນສາມພາກໄດ້ຢ່າງໃດ?
2. ພຣະເຈົ້າໄດ້ສຳແດງຄວາມຮັກ ຄວາມເມດຕາໃນປະຖົມມະການ 3:22-24 ຢ່າງໃດແດ່?
3. ຄວາແຕກຕ່າງການສັມພັນກັບພຣະເຢຊູຄຣິດໃນຊີວິດຂອງທ່ານ ກັບການປະເຊີນກັບການທົດລອງຢູ່ນັ້ນເປັນຢ່າງໃດ?
4. ທ່ານຈະນຳຄວາມຈິງຂອງພຣະເຈົ້າກ່ຽວກັບການພິພາກສາແລະພຣະຄຸນອັນລ້ຳເລີດຂອງພຣະອົງສູ່ຄົນອື່ນຟັງໄດ້ຫລືບໍ່?

**<u>ສລູບ</u>:**

1. **ຖາມ:** ການຍອມສາຣະພາບຜິດຂອງທ່ານຕໍ່ພຣະເຈົ້າຍາກຫລາຍປານໃດ? ຢ່າງໃດກໍຕາມ ເວລາເຮົາບໍ່ຍອມເຮັດຕາມຄຳສັ່ງຂອງພຣະອົງ ການສັມພັນຂອງເຮົາກັບພຣະອົງກໍລົ້ມທະລາຍ. ມີແຕ່ທາງດຽວຄືຄວາມເຊື່ອໄວ້ວາງໃຈໃນພຣະເຢຊູຄຣິດເຈົ້າ ຜູ້ບໍຣິສຸດ ແລະຕາຍເທິງໄມ້ກາງແຂນເພື່ອຄວາມຜິດບາບຂອງພວກເຮົາ ແລະຄືນພຣະຊົນໃນມື້ທີສາມເທົ່ານັ້ນທີ່ເຮົາຈະໄດ້ມີໂອກາດຄືນດີກັບພຣະເຈົ້າພຣະບິດາຂອງພວກເຮົາ.
2. ເຮົາຕ້ອງອະທິຖານຂໍໃຫ້ພຣະອົງຊົງນຳ ແລະຂໍໃຫ້ພຣະອົງຊົງຍົກໂທດຄວາມຜິດບາບອອກຈາກພວກເຮົາ, ທູນຂໍໃຫ້ພຣະອົງອະພັຍບາບເຮົາ.
3. ໜູນໃຈນັກຮຽນເຂົ້າຫາພຣະເຈົ້າແລະຕິດພັນຢູ່ກັບພຣະອົງກ່ອນເຂົາຈະປະສົບກັບການທົດລອງ.
4. ອະທິຖານປິດຫ້ອງຮຽນ.

ລາວຊາວເທີນບັບຕິສສັມພັນ ແປແລະຮຽບຮຽງໂດຍ J.H.